ແບບຮຽນເພື່ອການພັດທະນາ
ຄວາມຊຳນານໃນການຜະລິດເຂົ້າ
Rice Production
Skills Development Series



# ການກຳຈັດໜູນາ

# Controlling Field Rats

RECEIVED
01 DEC 2002

ກົມປູກຝັງ ແລະສົ່ງເສີມການກະເສດ
ໂຄງການ ລາວ-ອີຣີ
DEPARTMENT OF AGRICULTURE
AND EXTENSION
LAO-IRRI PROJECT

ໜ່ວຍງານຝຶກອົບຮົມສົ່ງເສີມກະສິກຳ
- 632.7
263

# ການກຳຈັດໜູນາ

# Controlling Field Rats

NAFES
ໜ່ວຍງານ ຝຶກອົບຮົມສົ່ງເສີມ
P.O. Box 811, Vientiane Lao P.D.R.
Tel / Fax: 021 - 740252
CETDU
Central Extension Training and Development Unit
Acc. No.: 04:263/1
Call No.: 632.7 IRRI

ກົມປູກຝັງ ແລະສົ່ງເສີມການກະເສດ
ໂຄງການ ລາວ-ອີຣີ
DEPARTMENT OF AGRICULTURE AND EXTENSION
LAO-IRRI PROJECT
1993

## ລະບຽບການ

ບົດຮຽນບົດນີ້ອະທິບາຍເຖິງສອງວິທີການກຳຈັດໜູໂດຍເນັ້ນໜັກການກຳຈັດໂດຍການໃຊ້ສານເຄມີ ແລະການກຳຈັດແບບພື້ນເມືອງ.

## ເຫດຜົນ

ໜູນາແມ່ນສັດຕູພືດທີ່ສຳຄັນ. ການເສັຍຫາຍຂອງຜົນຜະລິດໃນແຕ່ລະປີຢູ່ອາຊີຕາເວັນອອກສຽງໃຕ້ ຈາກການທຳລາຍຂອງໜູ ປະເມີນໄດ້ເຖິງ 5-60 % .ເພື່ອເຮັດໃຫ້ການເສັຍຫາຍນັ້ນລຸດໜ້ອຍຖອຍລົງ ມັນຈິ່ງມີຄວາມຈຳເປັນທີ່ເຮົາຈະຕ້ອງມີຄວາມຮູ້ຢ່າງພຽງພໍເພື່ອກຳຈັດໜູນາເຫລົ່ານັ້ນໃຫ້ໝົດໄປ.

## ຈຸດປະສົງ

ເມື່ອຮອດທ້າຍຂອງບົດຮຽນນີ້ແລ້ວທ່ານຈະສາມາດ

- ອະທິບາຍຂັ້ນຕອນການກຳຈັດໜູໂດຍການນຳໃຊ້ສານເຄມີ (ເຫຍື່ອລໍ້)
- ປະຕິບັດຂັ້ນຕອນການນຳໃຊ້ເຫຍື່ອລໍ້ ແລະ
- ອະທິບາຍພາກປະຕິບັດໃນການກຳຈັດໜູແບບພື້ນເມືອງ.

## ອຸປະກອນຕ່າງໆ

- ທົ່ງນາທີ່ໄດ້ດຳເຂົ້າໃສ່ແລ້ວປະມານ 2 ອາທິດ
- ກະບອກໃສ່ເຫຍື່ອ
- ຢາຂ້າຫນູແບບຊຳເຮື້ອຊະນິດໃດກໍໄດ້ເຊັ່ນ : ວາຣຟາຣິນ (War far in), ຄາວແມັຕທຣາລິລ (Coumatetralyl), ຄາວໂມໂຄລ (Coumo-chlor), ດິຟາຊີໂນນ (Diphacinone), ໂຄຣຟາຊີໂນນ(Chlorophacinone)ແລະອື່ນໆ.
- ວັດຖຸປຸງແຕ່ງເຮັດເຫຍື່ອເຊັ່ນ : ເຂົ້າປຣນ ຫລືເມັດສາລີ.





# ປະຕິບັດງານ 1.

# ການກຳຈັດດ້ວຍວິທີການນຳໃຊ້ສານເຄມີ (ເຫຍື່ອລໍ້)

## ຂັ້ນຕອນຕ່າງໆ

### 1. ຊອກບ່ອນໃສ່ເຫຍື່ອ.

ຫລັງຈາກດຳນາແລ້ວ 2 ອາທິດ, ຊອກບ່ອນໃສ່ເຫຍື່ອທຸກໆເຮັກຕາໃຫ້ໄດ້ 5 ບ່ອນ, ແຕ່ລະບ່ອນຢ່າງນ້ອຍ ຫ່າງກັນ 40 ແມັດ. ບ່ອນວາງເຫຍື່ອໃສ່ທີ່ເໝາະສົມນັ້ນໃຫ້ໃສ່ຕາມຄູຄັນນາ ແລະບ່ອນສີ່ແຍກຂອງຄູຄັນນາ.



## 2. ກຳນົດກະບອກເຫຍື່ອໃສ່ແຕ່ລະບ່ອນ.

ກະບອກໃສ່ເຫຍື່ອຈະແມ່ນກະປ໋ອງ, ກະບອກໄມ້ໄຜ່, ກະໂປ໊ະໝາກພ້າວ ແລະອື່ນໆກໍໄດ້, ແຕ່ຕ້ອງແມ່ນ ຊະນິດທີ່ຮັກສາບໍ່ໃຫ້ເຫຍື່ອປຽກຈາກການຖືກນ້ຳຝົນ.



## 3. ເລືອກເຟັນ ແລະ ປະສົມຢາຂ້າໜູ.

ປະສົມຢາຂ້າໜູເຂົ້າກັບວັດຖຸທີ່ປຸງແຕ່ງເປັນເຫຍື່ອຈາກຄຳແນະນຳຂອງຜູ້ຜະລິດ ດັ່ງຕໍ່ລົງໄປນີ້ຢ່າງເຄັ່ງຄັດ. ບາງຕົວຢ່າງຢາຂ້າໜູ ແລະອັດຕາສ່ວນຂອງວັດຖຸເພື່ອປຸງແຕ່ງເປັນເຫຍື່ອມີດັ່ງນີ້ :

| ຢາຂ້າ ໜູ | ສູດປະສົມ % | ອັດຕາສ່ວນ ຢາພິດຕໍ່ວັດ ຖຸເພື່ອປຸງແຕ່ງ ເຮັດເຫຍື່ອ* | ວັດຖຸເພື່ອ ປຸງແຕ່ງ |
|---|---|---|---|
| - ວາຣ ຟາຣິນ | 0.50 | 1:19 | ສາລີບົດຫຼື ເຂົ້າປຣນ |
| - ຄາວແມັດ ທຣາລິລ | 0.75 | 1:19 | ສາລີບົດຫຼື ເຂົ້າປຣນ |
| - ຄາວໂມ ຄລໍຣ | 1.00 | 1:40 | ເຂົ້າສີ(ມຸ່ນ)ຫຼື |
| - ດີຟາ ຊີໂນນ | 1.10 | 1:30 | ເຂົ້າປຣນ ເຂົ້າສາລີ |
| - ໂຄລໂຣ ຟາຊີໂນນ | 0.25 | 1:50 | ເຂົ້າສາລີ |

*1:19 = ໝາຍຄວາມວ່າຢາພິດ 1 ສ່ວນແລະ
ວັດຖຸທີ່ປຸງແຕ່ງເປັນເຫຍື່ອ 19 ສ່ວນ.

4. ເອົາເຫຍື່ອທີ່ປະສົມຢາເບື່ອແລ້ວໃສ່ກະບອກ.

ກະບອກເຫຍື່ອນຶ່ງອັນໃສ່ເຫຍື່ອ 6 ບ່ວງ (ບ່ວງຊິດແກງ).



**5. ຫລັງຈາກໃສ່ເຫຍື່ອໄດ້ 4 ມື້ແລ້ວຕ້ອງກວດເບິ່ງ.**

ຖ້າເຫຍື່ອບ່ອນໃດຖືກກິນຫມົດແລ້ວ, ໃຫ້ຕື່ມກະບອກໃສ່ເຫຍື່ອອີກ 2 ອັນ. ແຕ່ລະ 3 ກະບອກໃຫ້ໃສ່ 6 ບ່ວງຕັກແກງ.

ຫລັງຈາກນັ້ນແລ້ວ 4 ມື້ ໃຫ້ກວດກາເບິ່ງອີກ. ຖ້າວ່າເຫຍື່ອທັງຫມົດຖືກກິນຫມົດໄປແລ້ວ ໃຫ້ເພີ້ມກະບອກໃສ່ອີກ 3 ອັນ ແລະຕື່ມເຫຍື່ອໃສ່ແຕ່ລະກະບອກອີກດ້ວຍ.



**6. ສືບຕໍ່ກວດກາກະບອກໃສ່ເຫຍື່ອນັ້ນໃຫ້ສະໝ່ຳສະເໝີ.**

ຖ້າວ່າການກິນເຫຍື່ອນັ້ນເພີ້ມຂຶ້ນ ໃຫ້ເພີ້ມຈຸດໃສ່ເຫຍື່ອຕື່ມຂຶ້ນອີກ.



7. ເອົາເຫຍື່ອທີ່ເກີດມີເຊື້ອລານັ້ນອອກຖິ້ມແລ້ວ
ຕື່ມອັນໃຫມ່.



8. ເພື່ອເຮັດໃຫ້ການກຳຈັດໜູດ້ວຍການນຳໃຊ້ສານເຄມີເປັນເຫຍື່ອລໍ້ໃຫ້ໄດ້ຜົນນັ້ນ ເຮົາຕ້ອງທຳລາຍບ່ອນຢູ່ອາໄສຂອງໜູ ໂດຍການຮັກສາໄຮ່ນາແລະບໍລິເວນໃກ້ຄຽງ ໃຫ້ສະອາດຕລອດທັງຄູກັນນ້ຳອີກດ້ວຍ.



9. ກ່ອນການເກັບກ່ຽວ 2 ອາທິດຕ້ອງໄດ້ເກັບເອົາເຫຍື່ອ(ຢາຂ້າຫມູ) ອອກໃຫ້ຫມົດ.



ປະຕິບັດງານ 2.

# ການກຳຈັດຫນູແບບພື້ນເມືອງ

## ຂັ້ນຕອນຕ່າງໆ

1. ຈົ່ງດຳເຂົ້າໃສ່ພື້ນທີ່ໃກ້ຄຽງກັນນັ້ນໃນເວລາດຽວກັນ.

ຕົ້ນກ້າທີ່ໄດ້ດຳໃສ່ບໍລິເວນທີ່ງນາອັນກວ້າງຂວາງ ໃນເວລາດຽວກັນຈະມີການສູນເສັຽຫນ້ອຍກ່ວາບ່ອນທີ່ດຳໃສ່ເປັນຕອນໃຜຕອນມັນ.



2. ຫລັງຈາກດຳນາແລ້ວຈິ່ງຮັກສາໄຮ່ນາໃຫ້ສະອາດ.

ໄຮ່ນາທີ່ສະອາດຈະລຸດຜ່ອນບ່ອນຢູ່ອາໃສຂອງໜູ.



**3. ຮັກສາຄູຄັນນາໃຫ້ແຄບ ແລະບໍ່ໃຫ້ມີວັດຊະພືດເກີດຂຶ້ນໄດ້. ກຳຈັດວັດຊະພືດຢູ່ຕາມຄູຄັນນາແລະບໍລິເວນໃກ້ຄຽງ.**

ຄູຄັນນາແຄບຈະເປັນການຈຳກັດການຄວັດຮູຂອງໜູ ແລະການເຕີບໂຕຂອງວັດຊະພືດ. ຮັກສາຄູຄັນນາ ແລະບໍລິເວນໃກ້ຄຽງບໍ່ໃຫ້ມີວັດຊະພືດເພື່ອລຸດຜ່ອນບ່ອນຢູ່ອາໃສຂອງໜູໃນເວລາກາງເວັນ.



4. ຫລັງຈາກກ່ຽວເຂົ້າແລ້ວເກັບຕໍເຟືອງອອກ
ໃຫ້ໝົດ.

ຂຸມຕໍເຟືອງນັ້ນຈະເປັນສະຖານທີ່ ໃຫ້ໜູໄດ້ຄວັດຮູ, ເຮັດຮັງ ແລະເພາະພັນໃສ່.



## ນິຍາມຂໍ້ຄວາມ

**ສານເບື່ອ** : ສານເຄມີນຳໃຊ້ເພື່ອເບື່ອສັດທີ່ໃຊ້ແຂ້ວແທ້ນ ຫລືຫນູ.

**ສານເບື່ອລິດແຮງ** : ສານເຄມີທີ່ອອກລິດຢ່າງໄວ ແລະຫລັງຈາກສັດກິນແລ້ວຈະຕາຍໃນເວລາທັນທີທັນໃດໂລດ (ຄືກັນກັບສານເຄມີ).

**ສານເບື່ອຊຳເຮື້ອ** : ລິດຕ້ານການແຂງຕົວ. ມັນເຮັດໃຫ້ເລືອດອອກພາຍໃນຫລາຍໆມື້ຫລັງຈາກຫນູໄດ້ຕາຍໄປແລ້ວ.

## ປະເມີນຜົນ :

**ຈົ່ງຈັດຫາວັດຖຸທັງຫມົດທີ່ຕ້ອງການ, ສາທິດຂັ້ນຕອນການນຳໃຊ້ສານເຄມີ:**

1. ຊອກຫາຈຸດວາງໃສ່ເຫຍື່ອ.
2. ກະກຽມກະບອກໃສ່ເຫຍື່ອ.
3. ເລືອກໃຊ້ຢາຂ້າຫນູໃຫ້ຖືກຕ້ອງ.
4. ເອົາເຫຍື່ອເບື່ອໃສ່ໃນກະບອກ.
5. ກວດກາກະບອກໃສ່ເຫຍື່ອພາຍໃນ 4 ມື້ຕໍ່ມາ.
6. ສືບຕໍ່ກວດເບິ່ງກະບອກເຫຍື່ອຢ່າງສະຫມ່ຳສະເຫມີ.
7. ເອົາເຫຍື່ອທີ່ເກີດມີເຊື້ອລາ ແລະ ເຫຍື່ອປຽກແລ້ວອອກຖິ້ມ.
8. ທຳລາຍບ່ອນຢູ່ອາໃສຂອງຫນູ.
9. ກ່ອນການເກັບກ່ຽວເຂົ້າ 2 ອາທິດຕ້ອງເກັບເອົາເຫຍື່ອເບື່ອຫນູອອກໃຫ້ຫມົດ

ພິມທີ່ວິສາຫະກິດ ການພິມຈຳໜ່າຍສຶກສາ